**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

----===000===----

ກະຊວງໂຍທາທິການ ແລະຂົນສົ່ງ                                    ເລກທີ:......................../ຍທຂ

ນະຄອນຫລວງວຽງຈັນ, ວັນທີ:.................................

# ບົດລາຍງານຂອງທ່ານລັດຖະມົນຕີວ່າການ ກ່ຽວກັບການສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານສົກປີ 2013-2014 ແລະທິດທາງແຜນການສົກປີ 2014-2015 ຂອງຂະແໜງ ຍທຂ ຕໍ່ກອງປະຊຸມ ຍທຂ ທົ່ວປະເທດ ປະຈໍາປີ 2014, ວັນທີ 8-9/01/2015

ຮຽນ: - ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ, ກໍາມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນໍາວຽກງານເສດຖະກິດການຜະລິດ ແລະຈໍລະຈອນທີ່ເຄົາລົບ ແລະນັບຖື.

- ບັນດາທ່ານລັດຖະມົນຕີວ່າການ ແລະຊ່ວຍວ່າການ ທີ່ນັບຖື.
- ບັນດາທ່ານຮອງເຈົ້າແຂວງ ແລະຮອງເຈົ້າຄອງນະຄອນຫລວງວຽງຈັນ ທີ່ນັບຖື.
- ບັນດາທ່ານຫົວໜ້າກົມ, ຫົວໜ້າພະແນກ ຍທຂ ແຂວງ ແລະນະຄອນຫລວງ, ບັນດາທ່ານແຂກທີ່ມີກຽດ, ທ່ານຍິງ ແລະທ່ານຊາຍ ທີ່ນັບຖື ແລະຮັກແພງ.

ຂ້າພະເຈົ້າ,ຕາງໜ້າໃຫ້ກະຊວງໂຍທາທິການ ແລະຂົນສົ່ງ, ລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຂະແໜງ ຍທຂ ໃນສົກປີງົບປະມານປີ 2013-2014, ຊຶ່ງບົດລາຍງານຂອງຂ້າພະເຈົ້າປະກອບດ້ວຍ 3 ພາກຄື:

I. ສະພາບການຈັດຕັ້ງປະຕິບັດວຽກງານ ຍທຂ ໃນສົກງົບປະມານປີ 2013/2014.

II. ສະເໜີທິດທາງແຜນການສໍາລັບສົກງົບປະມານປີ 2014/2015.

III. ມາດຕະການຈັດຕັ້ງປະຕິບັດ.

## I. <u>ສະພາບການຈັດຕັ້ງປະຕິບັດວຽກງານ ຍທຂ ໃນສົກປີ 2013-2014:</u>

ໂດຍປະຕິບັດຕາມວິໄສທັດທີ່ວ່າ: “ເປັນປາຍແຫລມທີ່ມີຈຸດສຸມ ປອດໄພ ແລະຍືນຍົງໃນການປະຕິບັດ 2 ໜ້າທີ່ຍຸດທະສາດ”, ໃນໄລຍະ 1 ປີຜ່ານມາ ກະຊວງ ຍທຂ ໄດ້ປະຕິບັດໜ້າທີ່ຄຸ້ມຄອງມະຫາພາກຂອງຕົນຢ່າງຕັ້ງໜ້າ ແລະມີຜົນສໍາເລັດໃນຫລາຍໆດ້ານ, ໂດຍສະເພາະແມ່ນໄດ້ສໍາເລັດການສ້າງ ແລະປັບປຸງກົດໝາຍ, ນິຕິກໍາລຸ່ມກົດໝາຍ ແລະແຜນຍຸດທະສາດຂອງຂະແ

ໜຶ່ງການເປັນຕົ້ນແມ່ນແຜນຍຸດທະສາດພັດທະນາໂລຊິດສະຕິກຂົນສົ່ງສິນຄ້າທາງບົກ, ແຜນພັດທະນາດ້ານໂຍທາທິການທາງນ້ຳ, ແຜນຍຸດທະສາດ ແລະແຜນດຳເນີນງານຄວາມປອດໄພທາງຖະໜົນ, ແຜນຍຸດທະສາດການພັດທະນາຕົວເມືອງ,ແຜນຍຸດທະສາດພັດທະນາການບິນພົນລະເຮືອນ, ຍຸດທະສາດການເຊື່ອມໂຍງສາກົນ ແລະການເຊື່ອມຈອດພາກພື້ນດ້ານໂຍທາທິການ ແລະຂົນສົ່ງ ແລະລະບຽບການລວມຈຳນວນໜຶ່ງ, ຊຶ່ງນິຕິກຳເຫລົ່ານີ້ ຈະກາຍເປັນເຄື່ອງມືໃນການຄຸ້ມຄອງມະຫາພາກ ເຮັດໃຫ້ການຈັດຕັ້ງປະຕິບັດສາມາດຕິດຕາມກວດກາໄດ້ຢ່າງມີປະສິດທິຜົນ.

## 1.1 ວຽກງານແຜນການ ແລະການຮ່ວມມື:

ໄດ້ຈັດຕັ້ງປະຕິບັດແຜນງົບປະມານການລົງທຶນຂອງລັດໃນສົກປີ 2013-2014 ຊຶ່ງໄດ້ຮັບທັງໝົດ 2.182,43 ຕື້ກີບ ໃນນັ້ນ ເປັນທຶນພາຍໃນ 500,37 ຕື້ກີບ ເພື່ອຈັດຕັ້ງປະຕິບັດຈຳນວນ 449 ໂຄງການ. ຜ່ານການປະຕິບັດການເບີກຈ່າຍໝົດສົກປີ ສາມາດປະຕິບັດໄດ້ 85,75%, ໃນນັ້ນ ທຶນພາຍໃນປະຕິບັດໄດ້ 99,92% ແລະທຶນຕ່າງປະເທດປະຕິບັດໄດ້ 81,59% ຂອງແຜນການ. ນອກຈາກນັ້ນ, ຍັງປະຕິບັດວຽກງານຮ່ວມມືສາກົນດ້ວຍຄວາມເປັນເຈົ້າການ ແລະມີຜົນສຳເລັດຫລາຍດ້ານເປັນຕົ້ນ: ການສ□າຫລວດເບື້ອງຕົ້ນ ແລວທາງທີ່ສັ້ນທີ່ສຸດເຊື່ອມຕໍ່ນະຄອນຫລວງວຽງຈັນ-ຮ່າໂນ້ຍ, ສົມທົບກັບທະນາຄານ Exim Bank ສປ ຈີນ ສຶກສາແຜນພັດທະນາຕາໜ່າງເສັ້ນທາງໃນທົ່ວປະເທດ (3911), ສຳເລັດການສຶກສາຄວາມເປັນໄປໄດ້ການສຳຫລວດອອກແບບເພື່ອຍົກລະດັບທາງເລກທີ 13 ຕອນທາງນະຄອນຫລວງວຽງຈັນ-ໂພນໂຮງ ແລະນະຄອນຫລວງວຽງຈັນ-ທ່າບົກ ໃຫ້ເປັນທາງ 4 ເລນ ປູດ້ວຍຢາງຂີ້ອາສຟານ (A/C) ຄວາມຍາວ 130 ກມ ດ້ວຍຮູບແບບການມີສ່ວນຮ່ວມລະຫວ່າງພາກລັດ ແລະເອກະຊົນ (PPP) ໂດຍນ□າໃຊ້ເງິນກູ້ ແລະຊ່ວຍເຫລືອລ້າຈາກທະນາຄານໂລກຈ□ານວນໜຶ່ງ, ເງິນປະກອບສ່ວນຂອງພາກສ່ວນທຸລະກິດ ແລະພາກລັດ.

## 1.2 ວຽກງານພັດທະນາບຸກຄະລາກອນ ແລະການຈັດຕັ້ງ

ກະຊວງ ຍທຂ ຍາມໃດກໍຖືເອົາວຽກງານສຶກສາອົບຮົມ ນຳພາການເມືອງແນວຄິດ ຕາມນະໂຍບາຍຂອງພັກ ແລະລັດ ມາສຶກສາອົບຮົມ ແລະພັດທະນາບຸກຄະລາກອນເປັນສຳຄັນ ເພື່ອຍົກລະດັບພະນັກງານ ໃຫ້ມີຄວາມຮັບຮູ້ເຂົ້າໃຈ ຕໍ່ແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກ, ການເຊື່ອມໂຍງສາກົນໃຫ້ທ່ວງທັນກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່, ໃນນີ້ໄດ້ໄປຝຶກອົບຮົມໄລຍະສັ້ນ ແລະໄລຍະຍາວຢູ່ພາຍໃນ ແລະຕ່າງປະເທດໄດ້ທັງໝົດປະມານ 2.023 ເທື່ອຄົນ. ນອກຈາກນັ້ນ, ໄດ້ມີການປັບປຸງກົງຈັກການຈັດຕັ້ງ ໃຫ້ສອດຄ່ອງກັບການຄຸ້ມຄອງວຽກງານໃຫ້ແທດເຖິງກວ່າເກົ່າ ໂດຍໄດ້ສ້າງຕັ້ງກົມການເງິນ, ກົມທາງລົດໄຟ, ກົມນ□າປະປາ, ກົມນິຕິກຳ, ປັບປຸງພາລະບົດບາດຂອງບັນດາກົມ ແລະກະຊວງຄືນໃໝ່. ສຳລັບເມືອງທົດລອງສາມສ້າງຈຳນວນ 51 ເມືອງ ກໍ່ໄດ້ປັບປຸງພາລະບົດບາດຂອງຫ້ອງການ ຍທຂ ເມືອງສາມສ້າງ ເພື່ອທົດລອງນຳໃຊ້ໃຫ້ຖືກຕາມທິດສາມສ້າງ.

### 1.3 ວຽກງານຂົວທາງ

ການຈັດແບ່ງປະເພດເສັ້ນທາງຢູ່ປະເທດພວກເຮົາມີ 6 ປະເພດ, ມີລວງຍາວທັງໝົດ 45.825 ກມ ໃນສົກປີ 2013/2014 ໄດ້ສຳເລັດວຽກສ້ອມແປງຂົວ ແລະທາງ ສຳລັບທາງຫລວງແຫ່ງຊາດ ຄວາມຍາວ 7.000 ກມ ໃຫ້ສາມາດໄປ-ມາໄດ້ລື່ງລ່ຽນຕະຫລອດປີ ແລະທາງຫລວງແຂວງທີ່ສຳຄັນຈຳນວນໜຶ່ງ. ໄດ້ສຳເລັດການກໍ່ສ້າງເສັ້ນທາງປູຢາງຈຳນວນ 8 ເສັ້ນ ຄວາມຍາວ 711 ກມ ແລະກໍ່ສ້າງຂົວໃຫຍ່ດ້ວຍເບຕົງເສີມເຫລັກຈຳນວນ 2 ແຫ່ງ ຄວາມຍາວ 1.380 ແມັດ. ນອກຈາກນີ້, ຍັງມີບັນດາໂຄງການສືບຕໍ່ປະຕິບັດ ເປັນຕົ້ນ: ໂຄງການກໍ່ສ້າງຂົວມິດຕະພາບລາວ-ມຽນມ້າປະຕິບັດໄດ້97% ລື່ນແຜນການ, ໂຄງການກໍ່ສ້າງທາງ1A ບຸນເໜືອ-ລາຍຕຸຍ ປະຕິບັດໄດ້43%, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງນາສັກ-ໂຄກເຂົ້າດໍ ປະຕິບັດໄດ້ 40%, ໂຄງການປັບປຸງທາງເລກ9 ຊ່ວງຍີ່ປຸ່ນຊ່ວຍເຫລືອ ປະຕິບັດໄດ້ 90%, ໂຄງການກໍ່ສ້າງທາງຊຽງຮ່ອນ-ເມືອງຄອບ-ກ້ອນຕື້ນ ປະຕິບັດໄດ້ 6%, ໂຄງການກໍ່ສ້າງທາງເລກ 13 ເໜືອ ເມືອງໄຊ-ປາກມອງປະຕິບັດໄດ້ 38%.

### 1.4 ວຽກງານຂົນສົ່ງ

ໄດ້ຄົ້ນຄວ້າລະບຽບກອງທະບຽນກາງ, ປັບປຸງລະບຽບສະບັບເລກທີ 829/ຄຂປກ, ລະບຽບສູນກວດກາເຕັກນິກລົດ ປະຈຸບັນໄດ້ສຳເລັດການອອກແບບປ້າຍໃໝ່ ໃຫ້ສອດຄ່ອງກັບສົນທິສັນຍາໃນກອບ GMS. ດ້ານການຂົນສົ່ງໂດຍສານ,ປັດຈຸບັນ ມີບໍລິສັດ ແລະສະມາຄົມຂົນສົ່ງໂດຍສານເຂົ້າຮ່ວມທຸລະກິດມີ 114 ຫົວໜ່ວຍ, ມີພາຫະນະຂົນສົ່ງໂດຍສານເຂົ້າຮ່ວມທັງໝົດ 7.250 ຄັນ. ສາຍທາງຂົນສົ່ງໂດຍສານພາຍໃນຈາກເມືອງຫາສູນກາງ 13 ສາຍທາງ, ສາຍທາງພາຍໃນແຂວງມີ 119 ສາຍທາງ, ບໍລິສັດດຳເນີນທຸລະກິດຂົນສົ່ງໂດຍສານລະຫວ່າງປະເທດມີ 27 ຫົວໜ່ວຍມີພາຫານະທັງໝົດ 180ຄັນແລະສາຍທາງລະຫວ່າງປະເທດມີ 63ສາຍທາງຄື: ລາວ-ຫວຽດນາມ 35 ສາຍທາງ,ລາວ-ຈີນ 15 ສາຍທາງ, ລາວ-ໄທ 11ສາຍທາງແລະລາວ-ກຳປູເຈຍ 2ສາຍທາງ.

ປະຈຸບັນມີບໍລິສັດຂົນສົ່ງສິນຄ້າທີ່ຂຶ້ນທະບຽນ 63 ບໍລິສັດ, ມີ 33 ສະມາຄົມຂົນສົ່ງສິນຄ້າ ແລະມີຍານພາຫານະຂົນສົ່ງທັງໝົດ 7.200 ຄັນ.

ສະຫລຸບແລ້ວໃນສົກປີ 2013-14 ການຂົນສົ່ງໂດຍສານປະຕິບັດໄດ້ 48.532 ພັນຄົນ/ກມ ເພີ້ມຂຶ້ນ 7%, ຂົນສົ່ງສິນຄ້າປະຕິບັດໄດ້ 4.638 ພັນໂຕນ/ກມ ເພີ້ມຂຶ້ນ 12%.

### 1.5 ວຽກງານເຄຫາ ແລະຜັງເມືອງ

ມາເຖິງປະຈຸບັນ ໄດ້ສຳເລັດການວາງແຜນຜັງເມືອງຈຳນວນ 147 ຕົວເມືອງ ໃນຈຳນວນ 148 ຕົວເມືອງ ແລະໄດ້ສ້າງແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການພັດທະນາຕົວເມືອງເຖິງປີ 2030 ແລະໄດ້ສຳເລັດການອອກແບບພ້ອມປົດແນະນຳການສ້າງເຮືອນຢູ່ອາໄສທີ່ຕິດພັນກັບການລົບລ້າງຄວາມທຸກຍາກ, ສ□າເລັດການສ້າງປື້ມຄູ່ມືການວາງແຜນຜັງບ້ານພັດທະນາ ບ້ານໃຫຍ່

ແລະຕົວເມືອງນ້ອຍໃນຊົນນະບົດ,ສຳເລັດການສ້າງແຜນແມ່ບົດພັດທະນາລະບົບນ້ຳປະປາແລະຄຸ້ມຄອງນ້ຳເປື້ອນຢູ່ 5 ຕົວເມືອງ.

ໄດ້ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການຢ່າງມີຄວາມຄືບໜ້າເຊັ່ນ: ໂຄງການກໍ່ສ້າງນ້ຳປະປາແລະສຸຂາພິບານຕົວເມືອງນ້ອຍປະຕິບັດໄດ້ 79%, ໂຄງການກໍ່ສ້າງແລະຂະຫຍາຍນ້ຳປະປາດົງໝາກຄາຍໄລຍະ 2 ປະຕິບັດໄດ້ 42%, ໂຄງການກໍ່ສ້າງນ້ຳປະປາ5 ຕົວເມືອງ (ເມືອງແບງ, ຄອບ,ໂຂງ, ໄຊບູລີແລະຫ້ວຍຊາຍ) ປະຕິບັດໄດ້3%. ໄດ້ຄົ້ນຄວ້າປະກອບຄຳເຫັນແລະກວດຜ່ານແບບແຜນຜັງແລະໃບປະເມີນລາຄາໂຄງການກໍ່ສ້າງທີ່ນຳໃຊ້ງົບປະມານຂັ້ນສູນກາງທັງໝົດ 48 ໂຄງການ.

### 1.6 ວຽກງານໂຍທາທິການທາງນ້ຳ

ໂດຍໄດ້ຮັບການສະໜັບສະໜູນຈາກແຜນງານເດີນເຮືອຂອງຄະນະກຳມະທິການແມ່ນ້ຳຂອງສາກົນ ໄດ້ຕິດຕັ້ງແພຫຼຸບເຮືອຢູ່ຕາມທ່າຫຼຸບເຮືອແມ່ນ້ຳຂອງແລະແມ່ນ້ຳສາຂາສຳເລັດ25ແຫ່ງ, ພ້ອມທັງນຳໃຊ້ລະບົບ GPS ເພື່ອການເດີນເຮືອແຕ່ຫ້ວຍຊາຍ-ຫລວງພະບາງເພື່ອຍຸກຍູ້ສົ່ງເສີມຜູ້ປະກອບການຂົນສົ່ງທາງນ້ຳໃຫ້ສືບຕໍ່ນຳໃຊ້ການຄົມມະນາຄົມທາງນ້ຳຕາມລຳແມ່ນ້ຳຂອງຕອນເໜືອແລະແມ່ນ້ຳສາຂາໃຫ້ເກີດປະໂຫຍດສູງສຸດ.

ວຽກຄຸ້ມຄອງການຂຸດຄົ້ນຫີນ ແຮ່ ຊາຍ ໃຫ້ຖືກຕ້ອງຕາມເຕັກນິກ ແລະນຳໃຊ້ບໍ່ບົກແຫ້ງໃນສົກປີ 2013-14 ໄດ້ອອກອະນຸຍາດໃຫ້ມີການຂຸດຄົ້ນທັງໝົດ 260 ບໍລິສັດ ໃນນີ້ສູນກາງອອກໃຫ້ 4 ບໍລິສັດ, ພະແນກ ຍທຂ ແຂວງອອກໃຫ້ 256 ບໍລິສັດ ແລະໄດ້ສືບຕໍ່ຈັດຕັ້ງປະຕິບັດໂຄງການປ້ອງກັນຕະຝັ່ງເຈື່ອນທັງໝົດ 18 ເປັນຕົ້ນ: ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານໂຄກເໜືອດ ແຂວງວຽງຈັນປະຕິບັດໄດ້ 30%, ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານໝາກຮຽວ ນະຄອນຫລວງວຽງຈັນ ປະຕິບັດໄດ້ 55%, ໂຄງການປ້ອງກັນຕາຝັ່ງເຈື່ອນບ້ານປາກຊັນເໜືອ-ປາກຊັນໃຕ້ ແຂວງບໍລິຄຳໄຊ ປະຕິບັດໄດ້ 64% ແລະອື່ນໆ.

### 1.7 ວຽກງານການບິນແລະພົນລະເຮືອນ

ເພື່ອເຮັດໃຫ້ການຂົນສົ່ງທາງອາກາດຂະຫຍາຍຕົວຢ່າງຕໍ່ເນື່ອງມີຄວາມສະດວກປອດໄພໄດ້ມາດຖະຖານສາກົນ, ໄດ້ສືບຕໍ່ປັບປຸງບັນດານິຕິກຳແລະຄູ່ມືຕ່າງໆເຊັ່ນ: ລະບຽບການວ່າດ້ວຍການຄຸ້ມຄອງຈໍລະຈອນທາງອາກາດ, ຄູ່ມືວ່າດ້ວຍການຄຸ້ມຄອງຄວາມປອດໄພການຈໍລະຈອນທາງອາກາດແລະຄູ່ມືວ່າດ້ວຍມາດຕະຖານພະນັກງານບັນຊາການຈາລະຈອນທາງອາກາດ.

ສຳເລັດການປັບປຸງຍົກລະດັບສະໜາມບິນຫລວງພະບາງ, ໂຄງການຍົກລະດັບສະໜາມບິນປາກເຊໄລຍະ 2 ປະຕິບັດໄດ້ 99%, ສ□າເລັດການສ້ອມແປງສຸກເສີນສະໜາມບິນອຸດົມໄຊ, ການກໍ່ສ້າງສະໜາມບິນແຫ່ງໃໝ່ຢູ່ແຂວງອັດຕະປືປະຕິບັດໄດ້85% ແລະການຍົກລະດັບສະໜາມບິນໜອງຄ້າງແຂວງຫົວພັນປະຕິບັດໄດ້16%.

ນອກຈາກນີ້, ໄດ້ເອົາໃຈໃສ່ວຽກງານຂົນສົ່ງທາງອາກາດໃນກອບຮ່ວມມື 2 ຝ່າຍ ແລະໃນກອບອາຊຽນຊຶ່ງມີຄວາມຄືບໜ້າເຊັ່ນ: ສຳເລັດການເຈລະຈາສັນຍາຂົນສົ່ງທາງອາກາດລາວ-ຍີ່ປຸ່ນ ຄາດວ່າຈະໄດ້ເຊັນກັນໃນເດືອນ 1/2015ນີ້, ໄດ້ສຳເລັດການເຈລະຈາເພື່ອສ້າງສັນຍາຂົນສົ່ງທາງອາກາດ 2 ຝ່າຍໂດຍໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັນແລ້ວມີ: ສປປລາວ-ອິດສະຕາລີ, ໄອແລນ, ສີລັງກາແລະຊາອຸດີອາລະເບຍ.

ໃນປີ 2014 ມີຖ້ຽວບິນຂຶ້ນລົງ: ພາຍໃນປະເທດ 20.447 ຖ້ຽວ, ຕ່າງປະເທດມີ 16.846 ຖ້ຽວ, ມີຖ້ຽວບິນບິນຜ່ານນ່ານຟ້າທັງໝົດ 186.100 ຖ້ຽວ. ສາມາດສ້າງລາຍຮັບຈາກການບໍລິການວິທະຍຸລົງເດີ່ນໄດ້ 2,32 ລ້ານໂດລາສະຫະລັດ ແລະສ້າງລາຍຮັບຈາກການບໍລິການການບິນຜ່ານໄດ້ 51,46ລ້ານໂດລາສະຫະລັດ, ຂົນສົ່ງຜູ້ໂດຍສານທາງອາກາດໄດ້ 407.000ຄົນ ແລະຂົນສົ່ງສິນຄ້າໄດ້ 1.000ໂຕນ.

### 1.8 ວຽກກວດກາ

ໄດ້ສ້າງກົງຈັດການຈັດຕັ້ງຂຶ້ນຊຶ່ງມີພະແນກກວດກາປະຈຳກົມ ແລະຂະແໜງກວດກາປະຈຳພະແນກ ຍທຂ ແຂວງ ແລະນະຄອນຫລວງ, ເພື່ອຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຂອງບັນດາກົມ ຂອງພະແນກ ຍທຂ ປະຈຳແຂວງ ດ້ວຍວິທີການຕິດຕາມກວດກາພາຍໃນ ແລະກວດກາແຕ່ຫົວທີໃນການປະຕິບັດແຜນງົບປະມານຂອງຂະແໜງການຂອງຕົນ ກ່ຽວກັບການຈັດຊື້ຈັດຈ້າງ ການຄຸ້ມຄອງບໍລິຫານລັດຕາມພາລະບົດບາດ, ສິດ, ໜ້າທີ່ຂອງແຕ່ລະພາກສ່ວນກົມ ກອງ, ພະແນກ ຍທຂ ແລະການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງ, ສ້ອມແປງ, ບູລະນະຮັກສາທາງຈຳນວນໜຶ່ງຢູ່ບັນດາແຂວງທີ່ນຳໃຊ້ງົບປະມານພາຍໃນ ແລະສາກົນ.

### 1.9 ວຽກງານສາມສ້າງ

ໄດ້ເອົາໃຈໃສ່ຊີ້ນຳຈັດຕັ້ງປະຕິບັດວຽກງານ 3 ສ້າງ ໂດຍໄດ້ແຕ່ງຕັ້ງຄະນະຊີ້ນ□າ ແລະກອງເລຂາຄະນະໜຶ່ງຂຶ້ນ ເພື່ອຕິດຕາມສະຫຼຸບວຽກງານ ຍທຂ ຢູ່ 51 ເມືອງທົດລອງ ແລະໄດ້ແຕ່ງຕັ້ງວິຊາການລົງເຮັດວຽກປະຈຳ ຢູ່ເມືອງສາມສ້າງຂອງນະຄອນຫຼວງວຽງຈັນ ຈຳນວນ 7 ສະຫາຍ, ມອບໂກຕ້າພະນັກງານໃຫ້ເມືອງສາມສ້າງຈຳນວນ 155 ຄົນ ຊຶ່ງກວມເອົາຫລາຍກວ່າ 60% ຂອງຈຳນວນຕົວເລກລັດຖະກອນຂອງກະຊວງ, ມາຮອດປະຈຸບັນ ຫ້ອງການ ຍທຂ ເມືອງສາມສ້າງມີພະນັກງານໜ້ອຍສຸດ 8 ສະຫາຍ ແລະສູງສຸດ 17 ສະຫາຍ. ພ້ອມທັງໄດ້ປຶກສາຫາລືແລະມອບວຽກໃຫ້ພະແນກ ຍທຂ ແຂວງ ແລະນະຄອນຫຼວງວຽງຈັນປະຕິບັດ 43 ໜ້າວຽກ ແລະຫ້ອງການ ຍທຂ ເມືອງທົດລອງ47 ໜ້າວຽກ ພ້ອມທັງໄດ້ຈັດຕັ້ງກອງປະຊຸມສະຫລຸບຖອດຖອນບົດຮຽນວຽກງານ 3 ສ້າງຂອງຂະແໜງ ຍທຂ ທົ່ວປະເທດໃນວັນທີ 10-12/9/2014. ຜ່ານການສະຫລຸບຕີລາຄາຂອງກອງປະຊຸມ ເຫັນວ່າບ້ານສາມສ້າງຈຳນວນໜຶ່ງໄດ້ມີໃບໜ້າໃໝ່ ເປັນຕົ້ນແມ່ນວຽກສ້າງຜັງບ້ານ, ສ້າງຕັ້ງໜ່ວຍງານ ຍທຂ ບ້ານເພື່ອຮັບຜິດຊອບເສັ້ນທາງພາຍໃນບ້ານ, ມອບວຽກສອບເສັງໃບຂັບຂີ່ລົດຈັກ ໃຫ້ຫ້ອງການ ຍທຂ ເມືອງຮັບຜິດຊອບ ແລະສ້າງປື້ມຄູ່ມືການ

ວາງແຜນຜັງບ້ານພັດທະນາ, ບ້ານໃຫຍ່ ແລະຕົວເມືອງນ້ອຍໃນຊົນນະບົດ. ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ສາມາດສະຫລຸບຖອດຖອນບົດຮຽນໄດ້ມີ 8 ບົດຮຽນ ແລະໄດ້ວາງແຜນສືບຕໍ່ຈັດຕັ້ງຜັນຂະຫຍາຍຕໍ່ໄປ.

## II. <u>ສະເໜີທິດທາງແຜນການສໍາລັບສົກປີ 2015-2014</u>

ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມສົກປີ 2014-2015 ຊຶ່ງເປັນປີມ້ອນທ້າຍຂອງແຜນການ 5 ປີຄັ້ງທີ VII ແຕ່ປີ 2011-2015ຂອງຂະແໜງ ຍທຂ ໃຫ້ສໍາເລັດຕາມແຜນການ.

**ວຽກງານແຜນການ ແລະການຮ່ວມມື:** ສືບຕໍ່ຄົ້ນຄວ້າ, ສະຫລຸບ ແລະສ້າງແຜນຕ່າງໆ ເປັນຕົ້ນ: ກໍານົດມາດຕະຖານລາຄາຫົວໜ່ວຍກໍ່ສ້າງຂົວທາງ, ເຄຫາຜັງເມືອງ ແລະທາງນ້□າ; ສະຫລຸບການຈັດຕັ້ງປະຕິບັດແຜນການ 5 ປີຄັ້ງທີVII ແລະສ້າງແຜນການ 5 ປີ ຄັ້ງທີ VIII ຂອງຂະ ແໜງ ຍທຂ; ສ້າງແຜນງົບປະມານສໍາລັບສົກປີ 2015-2016 ໃຫ້ທັນເວລາ; ຈັດຕັ້ງການປະມູນ ໂຄງການຍົກລະດັບທາງ 13 ເໜືອ ແຕ່ນະຄອນຫລວງວຽງຈັນ-ໂພນໂຮງ ແລະນະຄອນຫລວງວຽງຈັນ-ທ່າບົກ ດ້ວຍຮູບແບບ PPP; ປະຕິບັດແຜນງົບປະມານການລົງທຶນຂອງລັດໃນສົກປີ 2014-2015 ທີ່ໄດ້ຮັບຈໍານວນ 2.179,45 ຕື້ກີບ ໃນນັ້ນ ເປັນທຶນພາຍໃນຈໍານວນ 522 ຕື້ກີບ ເພື່ອຈັດຕັ້ງປະຕິບັດ 461 ໂຄງການ ໃຫ້ສໍາເລັດຕາມແຜນການ ແລະປະຕິບັດຕາມວິ ໄນແຜນການ ແລະການເງິນຢ່າງເຂັ້ມງວດ ແລະອື່ນໆ.

**ວຽກງານພັດທະນາບຸກຄະລາກອນ:**ສືບຕໍ່ຄົ້ນຄວ້າ ແລະປັບປຸງການຈັດຕັ້ງ ແລະຍົກລະດັບພະນັກງານ-ລັດຖະກອນ ໃນນັ້ນ ດໍາເນີນການສ້າງຕັ້ງກົມນໍ້າປະປາ, ກົມນິຕິກໍາ ແລະຍົກລະດັບສະຖາບັນ ແລະສູນຝຶກ ຍທຂ; ປັບປຸງດໍາລັດຂອງນາຍົກວ່າດ້ວຍກອງທຶນບູລະນະຮັກສາທາງຫລວງ; ປັບປຸງພາລະບົດບາດຂອງບັນດາກົມ ແລະດໍາລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງ ຍທຂ; ປະສານສົມທົບກັບທຸກພາກສ່ວນ ເພື່ອຄົ້ນຄວ້າທຶນຮອນໃນການຍົກລະດັບ ແລະກໍ່ສ້າງພະນັກງານໃຫ້ສູງຂຶ້ນທັງທາງດ້ານທິດສະດີ, ວິຊາສະເພາະ ແລະພາສາຕ່າງປະເທດ ແລະອື່ນໆ.

**ວຽກງານຂົວທາງ:** ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງຂົວທາງ ທີ່ມີໃນແຜນການລົງທຶນຂອງລັດທີ່ໄດ້ຮັບອະນຸມັດແລ້ວໃຫ້ສໍາເລັດຕາມແຜນການ ພ້ອມທັງຮັບປະກັນໃຫ້ໄດ້ມາດຕະຖານເຕັກນິກ ແລະລາຄາທີ່ສົມເຫດສົມຜົນ; ສືບຕໍ່ກະກຽມບັນດາໂຄງການໃໝ່ໃຫ້ ສໍາເລັດຕາມແຜນການ; ປັບປຸງກົດໝາຍວ່າດ້ວຍທາງຫລວງ; ປັບປຸງວຽກບູລະນະຮັກສາທາງຫລວງ ໂດຍການແບ່ງຂັ້ນຄຸ້ມຄອງໃຫ້ຊັດເຈນ ລະຫວ່າງກະຊວງ ແລະທ້ອງຖິ່ນ; ປະສານກັບທຸກພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກຄຸ້ມຄອງເຂດສະຫງວນທາງຫລວງ ແລະອື່ນໆ.

**ວຽກງານຂົນສົ່ງ:**ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແກ້ໄຂບັນຫາທີ່ຄ້າງຄາຂອງວຽກງານຂົນສົ່ງໃຫ້ເປັນຮູບປະທໍາ ໂດຍສະເພາະແມ່ນການສ້າງຕັ້ງເຈົ້າໜ້າທີ່ ຍທຂ; ການຄຸ້ມຄອງລົດບັນທຸກນໍ້າໜັກເກີນຄືນໃໝ່ໃນທົ່ວປະເທດ; ການຄຸ້ມຄອງການຂົນສົ່ງໂດຍສານ ແລະສະຖານີລົດຂົນສົ່ງໂດຍສານ; ການຄຸ້ມຄອງການຂຶ້ນທະບຽນພາຫະນະ ການພິມໃບທະບຽນ ແລະໃບຂັບຂີ່;

ການແກ້ໄຂບັນຫາການຈາລະຈອນແອອັດ ແລະອຸປະຕິເຫດຕາມທ້ອງຖະໜົນ; ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການເຊັ່ນ: ໂຄງການປັບປຸງລະບົບການຂົນສົ່ງສາທາລະນະ ໃນນະຄອນຫລວງວຽງຈັນ, ໂຄງການວຽງຈັນໂລຊິດສະຕິກປາກ ແລະອື່ນໆ.

**ວຽກງານເຄຫາ ແລະຜັງເມືອງ:** ສືບຕໍ່ປັບປຸງກົດໝາຍວ່າດ້ວຍຜັງເມືອງ; ການຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍການປະກາດໃຊ້ກົດລະບຽບການປຸກສ້າງ (ສໍາລັບເຮັດທົດລອງໃນ 51 ເມືອງສາມສ້າງ); ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງເຄຫາສະຖານ ແລະນໍ້າປະປາໃຫ້ສໍາເລັດຕາມແຜນການ; ກໍານົດມາດຕະຖານອາຄານສໍານັກງານ-ອົງການລັດ;ເຜີຍແຜ່ປື້ມຄູ່ມືການວາງແຜນຜັງບ້ານພັດທະນາ ບ້ານໃຫຍ່ ແລະຕົວເມືອງນ້ອຍໃນຊົນນະບົດ ແລະອື່ນໆ.

**ວຽກງານໂຍທາທິການທາງນໍ້າ:**ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງທາງນໍ້າ ແລະປ້ອງກັນຕະຝັ່ງເຈື່ອນ ໃຫ້ສໍາເລັດຕາມແຜນການ; ສືບຕໍ່ຄຸ້ມຄອງ ແລະນໍາໃຊ້ທ່າເຮືອຫວຸງອາງ ເພື່ອຫັນໄປສູ່ທະເລທາງຕາເວັນອອກ; ສືບຕໍ່ກະກຽມໂຄງການກໍ່ສ້າງທາງເຮືອຊຽງກົກ, ປາກແບ່ງ ແລະໂຄກຈອງ ແລະອື່ນໆ.

**ວຽກງານການບິນແລະພົນລະເຮືອນ:** ປັບປຸງກົດໝາຍວ່າດ້ວຍການບິນພົນລະເຮືອນ; ສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງສະໜາມບິນຕ່າງໆໃຫ້ສໍາເລັດຕາມແຜນການເປັນຕົ້ນ: ສະໜາມບິນອັດຕະປື, ສະໜາມບິນໜອງຄ້າງ, ສະໜາມບິນປາກເຊໄລຍະ 2, ໂຄງການຂະຫຍາຍອາຄານຜູ້ໂດຍສານສະໜາມບິນສາກົນວັດໄຕ; ການສ້າງສັນຍາຂົນສົ່ງທາງອາກາດສອງຝ່າຍກັບບັນດາປະເທດຕ່າງໆ ແລະອື່ນໆ.

**ວຽກກວດກາ:**ສືບຕໍ່ເປັນເຈົ້າການວຽກງານຕິດຕາມກວດກາ ແນໃສ່ເຮັດໃຫ້ບັນດາໂຄງການຕ່າງໆຮັບປະກັນຄຸນນະພາບຕາມມາດຕະຖານເຕັກນິກ ແລະລາຄາທີ່ສົມເຫດສົມຜົນ ໂດຍການກວດກາແຕ່ຫົວທີ, ກວດກາເປັນປົກກະຕິ ແລະກວດກາພາຍຫລັງສໍາເລັດໂຄງການ ແລະໄລຍະຮັບປະກັນ ກ່ອນການມອບ-ຮັບໂຄງການ ແລະວຽກອື່ນໆ.

**ວຽກງານສາມສ້າງ:**ສືບຕໍ່ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ເພື່ອທົບທວນຄືນກ່ຽວກັບ 42 ວຽກທີ່ມອບໃຫ້ພະແນກ ຍທຂ ແຂວງ/ນະຄອນຫລວງ ແລະ 47 ວຽກທີ່ມອບໃຫ້ຫ້ອງການ ຍທຂ ເມືອງທົດລອງສາມສ້າງ ແນໃສ່ປັບປຸງ ແກ້ໄຂ ແລະສືບຕໍ່ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມທິດສາມສ້າງ; ສືບຕໍ່ຈັດຝຶກອົບຮົມໃຫ້ພະແນກ ຍທຂ ແຂວງ/ນະຄອນຫລວງ ແລະຫ້ອງການ ຍທຂ ເມືອງທົດລອງ ແລະອື່ນໆ.

## III. <u>ມາດຕະການຈັດຕັ້ງປະຕິບັດ</u>

ເພື່ອບັນລຸເປົ້າໝາຍຕາມທິດທາງແຜນການສົກປີ 2014-15 ຂອງກະຊວງຍທຂ ທີ່ພວກເຮົາວາງອອກ ໃຫ້ສໍາເລັດຢ່າງມີປະສິດທິພາບ ມີປະສິດທິຜົນພວກເຮົາໄດ້ກໍານົດບັນດາມາຕະການຈັດຕັ້ງປະຕິບັດຕົ້ນຕໍ ດັ່ງນີ້:

1) ມອບໃຫ້ກົມແຜນການ ແລະການຮ່ວມມືເປັນໃຈກາງສົມທົບກັບທຸກພາກສ່ວນຢູ່ສູນກາງ ແລະທ້ອງຖິ່ນເຜີຍແຜ່ ແລະສ້າງນິຕິກໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດດໍາລັດຂອງ

ນາຍົກລັດຖະມົນຕີ, ສະບັບເລກທີ 328/ນຍ, ລົງວັນທີ 17/9/2014ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ສົກປີ 2014-15 ຢ່າງທົ່ວເຖິງ ແລະຕິດຕາມກວດກາ, ປະເມີນຜົນ, ສະຫລຸບຕີລາຄາການຈັດຕັ້ງປະຕິບັດວຽກງານເປັນປະຈຳ (ເດືອນ, ງວດ ແລະປີ).

2) ມອບໃຫ້ກົມກວດກາ, ກົມການເງິນ ແລະຂະແໜງກວດກາ-ຂະແໜງການເງິນ ຢູ່ບັນດາພະແນກ ຍທຂ ທ້ອງຖິ່ນ ເປັນຜູ້ຕິດຕາມກວດກາແຜນລາຍຈ່າຍງົບປະມານ ໃຫ້ໄປຕາມແຜນການທີ່ສະພາແຫ່ງຊາດອານຸມັດ, ປະຕິບັດຢ່າງມີຈຸດສຸມບົນຈິດໃຈປະຢັດມັດທະຍັດ, ຖືກຕ້ອງຕາມຈຸດປະສົງເປົ້າໝາຍ ແລະບໍ່ປະຕິບັດເກີນແຜນ ຫລືນອກແຜນອານຸມັດເດັດຂາດ ພ້ອມທັງປະຕິບັດລະບົບສ່ອງແສງ ແລະລາຍງານຕາມສາຍຕັ້ງ-ສາຍຂວາງຂອງຕົນຢ່າງເປັນປົກກະຕິ.

3) ບັນດາກົມ, ສະຖາບັນ, ອົງການ ອ້ອມຂ້າງກະຊວງ ແລະບັນດາພະແນກ ຍທຂ ປະຈຳແຂວງ/ນະຄອນຫລວງທົ່ວປະເທດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະແຜນການລົງທຶນຂອງລັດສົກປີ 2014-2015 ດ້ວຍຈິດໃຈບຸກທະລຸທັງ 4 ດ້ານ, ຕິດພັນກັບຂະບວນການແຂ່ງຂັນຮັກຊາດແລະພັດທະນາແລະຕາມທິດ 3 ສ້າງໃຫ້ເປັນຮູບປະທຳຕົວຈິງ,ເພື່ອບັນລຸບັນດາຄາດໝາຍຕ່າງໆ ຂອງແຜນພັດທະນາເສດ ຖະກິດ-ສັງຄົມ ກໍ່ຄືຄາດໝາຍດ້ານລາຍຮັບ-ລາຍຈ່າຍແຜນງົບປະມານຂອງລັດ,ພ້ອມກັນນັ້ນ, ທັງກະກຽມໃຫ້ແກ່ການສະຫລຸບຕີລາຄາການປະຕິບັດວຽກງານດັ່ງກ່າວ ດ້ວຍການສ້າງໄດ້ຕົວແບບວຽກດີຄົນເດັ່ນໃນທ້າຍສົກປີ 2015 ຢ່າງຖືກຕ້ອງຕົວຈິງແທ້.

4) ເພີ່ມທະວີການພົວພັນ ແລະຮ່ວມມືກັບຕ່າງປະເທດ,ອົງການຈັດຕັ້ງສາກົນ, ສະຖາບັນການເງິນຕ່າງໆ ເພື່ອດຶງດູດການລົງທຶນ ແລະລະດົມທຶນມາພັດທະນາຂະແໜງ ຍທຂ, ໂດຍສະເພາະແມ່ນເລັ່ງໃສ່ບັນດາປະເທດເພື່ອນມິດຍຸດທະສາດຄື: ສສ ຫວຽດນາມ, ສປ ຈີນ ແລະ ບັນດາຄູ່ຮ່ວມພັດທະນາທີ່ບໍ່ມີຂໍ້ຜູກມັດ.

(ຂໍຂອບໃຈ)